ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ຫ້ອງການ

ເລກທີ 1519 /ຫກ.

ນະຄອນຫຼວງວຽງຈັນ, ວັນທີ 12 ຕຸລາ 2023

## ແຈ້ງການປະມູນ

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ **02 ພະຈິກ 2017;**
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການປັບປຸງລະບົບທໍ່ນໍ້າປະປາເຂົ້າອາຄານ ຕຶກ H ແລະ ປັບປຸງລະບົບເຮືອນຈັກໂປມນໍ້າ, ຕິດຕັ້ງໂປມດູດນໍ້າສະຖານີນໍ້າງື່ມໃນກໍລະນີນໍ້າບົກແຫ້ງ ຂອງ ສມປຊ ສະບັບເລກທີ 1452/ສມປຊ, ລົງວັນທີ 06 ຕຸລາ 2023.

1. ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີຄຸນວຸດທິເໝາະສົມ ເພື່ອ ຮ່ວມປະມູນ ໂຄງການປັບປຸງລະບົບທໍ່ນໍ້າປະປາເຂົ້າອາຄານຕຶກ H ແລະ ປັບປຸງລະບົບເຮືອນຈັກໂປມນໍ້າ, ຕິດຕັ້ງ ໂປມດູດນໍ້າສະຖານີນໍ້າງື່ມໃນກໍລະນີນໍ້າບົກແຫ້ງ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ. ປະຈໍາປີ 2023.

1. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດທີ່ຖືກຕ້ອງ ຕາມກົດໝາຍ ທີ່ກ່ຽວພັນກັບ ວຽກນໍ້າປະປາ, ໄຟຟ້າ ແລະ ກໍ່ສ້າງທົ່ວໄປ.
2. ບໍລິສັດທີ່ມີຄຸນວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການສະຖາບັນການ ເມືອງ ແລະ ການປົກຄອງແຫ່ງຊາດ ພະແນກແຜນການ-ການເງິນ ຜູ້ຮັບຜິດຊອບຊື່: ນ. ລຸນນີ ໄຊທະວີເພັດ ເບີ ໂທ 020 55053102 ແລະ ທ ພອຍ ເພັງພັກດີເບີໂທ 020 58561567 ໃນໂມງລັດຖະການ.
3. ບໍລິສັດໃດທີ່ຕ້ອງການຊື້ຊອງປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມຂາຍ ຊອງ ນັບແຕ່ 12 ຕຸລາ 2023 ເປັນຕົ້ນໄປ, ໃນລາຄາ 1.500.000 (ໜຶ່ງລ້ານຫ້າແສນກີບຕໍ່ໜຶ່ງຊອງ) ກີບ, ຈໍານວນ ເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 31 ຕຸລາ 2023 ທີ່ ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ຊອງປະມູນລາຄາທຸກໆ ຊອງຈະໄດ້ເປີດໃນເວລາ 09:30ໂມງ ຂອງວັນທີ 31 ຕຸລາ 2023 ໂດຍຊ່ອງໜ້າຄະນະຮັບຜິດຊອບໂຄງການ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ.
5. ທຸກໆ ຊອງປະມູນ ຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ໜັງສືຄໍ້າປະກັນການປະມູນຈາກ ທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 02% ຂອງລາຄາທີ່ສະເໜີເຂົ້າປະມູນ.
6. ສະຖານທີ່ຫ້ອງປະຊຸມຊັ້ນ II ຕຶກຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ

ຮັກສາການຫົວໜ້າຫ້ອງການ

ຫ້ອງການ

ຄົມວິກິດ ສົມມະລີວົງ

Scanned with CamScanner